ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ | ເລກທີ: 1501/ກປ

ນະຄອນຫຼວງວຽງຈັນ, ວັນທີ 23 JUN 2011

# ຄຳສັ່ງ
# ຂອງລັດຖະມົນຕີ
# ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ຕິດຕາມ ປ້ອງກັນ ແລະ ສະກັດກັ້ນການລະບາດຂອງເພ້ຍແປ້ງມັນຕົ້ນ

ເຖິງ:
- ທ່ານຫົວໜ້າກົມ, ກອງ, ສະຖາບັນ ແລະ ໂຄງການຕ່າງໆອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້;
- ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ;
- ທ່ານຫົວໜ້າດ່ານປ້ອງກັນພືດຊາຍແດນ.

- ອີງຕາມກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 0661/ກປຝ, ລົງວັນທີ 31 ພຶດສະພາ 2011.

ການປູກມັນຕົ້ນຢູ່ປະເທດ ຂອງພວກເຮົາກຳລັງໄດ້ຮັບການຊຸກຍູ້ສົ່ງເສີມຢ່າງແຂງແຮງ, ການຜະລິດມີທ່າຂະຫຍາຍຕົວໃນທົ່ວປະເທດ ທັງທາງດ້ານຄຸນນະພາບ ແລະ ປະລິມານ ໂດຍຕິດພັນກັບການຄໍ້າປະກັນສະບຽງອາຫານ, ສ້າງລາຍຮັບຂອງຄອບຄົວຊາວຊົນນະບົດ ແລະ ການຕອບສະໜອງວັດຖຸດິບໃຫ້ໂຮງງານປຸງແຕ່ງກະສິກຳ. ໃນໄລຍະຕົ້ນລະດູຝົນປີນີ້ ໄດ້ມີປະກົດການລະບາດເພ້ຍແປ້ງ ຊຶ່ງອາໄສດູດກິນນໍ້າລໍ້ລ້ຽງຕົ້ນພືດເປັນອາຫານ ເຮັດໃຫ້ຕົ້ນພືດອ່ອນເພຍ ແລະ ຕາຍ ຢູ່ພື້ນທີ່ປູກມັນຕົ້ນ ຂອງປະເທດໃກ້ຄຽງເປັນບໍລິເວນກວ້າງພໍສົມຄວນ ແລະ ກຳລັງມີທ່າອ່ຽງເພີ່ມຄວາມຮຸນແຮງຂຶ້ນ ຊຶ່ງໄດ້ທຳລາຍເນື້ອທີ່ສວນປູກມັນຕົ້ນແລ້ວ ຫຼາຍພັນເຮັກຕາ.

ໃນລະດູຝົນປີນີ້ ສະພາບດິນຟ້າອາກາດຂອງປະເທດພວກເຮົາ ອາດສາມາດປ່ຽນແປງໃຫ້ເກີດຄວາມເໝາະສົມ ແລະ ເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວ ແຜ່ພັນຂອງເພ້ຍແປ້ງມັນຕົ້ນທາງດ້ານປະລິມານ ແລະ ແຜ່ລາມໄປສູ່ພື້ນທີ່ອື່ນໄດ້ໄວ. ອີກດ້ານໜຶ່ງ, ຢູ່ປະເທດຂອງພວກເຮົາ, ໄດ້ມີການແລກປ່ຽນ ແລະ ນຳເຂົ້າແນວພັນປັບປຸງ (ງ່າພັນດີ) ມັນຕົ້ນ ມາຈາກປະເທດໃກ້ຄຽງເປັນຈຳນວນບໍ່ໜ້ອຍ ດ້ວຍຫຼາຍຮູບການ ຊຶ່ງສາມາດເປັນຊ່ອງຫວ່າງ ຫລື ໂອກາດສ່ຽງຕໍ່ການແຜ່ຂະຫຍາຍຂອງເພ້ຍແປ້ງ. ສະນັ້ນ, ເພື່ອກະກຽມ ການປ້ອງກັນ ແລະ ຮັບມື ກັບບັນຫາດັ່ງກ່າວ,

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບ ກັບອຳນາດການປົກຄອງທ້ອງຖິ່ນຂັ້ນແຂວງ, ເມືອງ, ຫົວໜ່ວຍທຸລະກິດ, ຜູ້ຜະລິດ ແລະ ຜູ້ປູກມັນຕົ້ນ ກວດກາຄືນພື້ນທີ່ປູກມັນຕົ້ນທີ່ຢູ່ໃນເຂດຮັບຜິດຊອບຂອງຕົນ, ກະກຽມວາງແຜນ ແລະ ວາງມາດຕະການຕົວຈິງ ໃນການຕິດຕາມ ປ້ອງກັນ ແລະ ສະກັດກັ້ນການລະບາດຂອງເພ້ຍແປ້ງມັນຕົ້ນຢ່າງທັນການ;
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ເພີ່ມທະວີຄວາມເອົາໃຈໃສ່ຊີ້ນຳ ໃຫ້ມີຄວາມເຂັ້ມງວດໃນການກວດກາການນຳເຂົ້າ ສົ່ງອອກ ຕົ້ນພືດ, ຊິ້ນສ່ວນ, ກິ່ງງ່າພືດ ຕາມດ່ານຊາຍແດນ ນັບທັງດ່ານສາກົນ ແລະ ດ່ານປະເພນີ ໂດຍສະເພາະ ມັນຕົ້ນ ແລະ ພືດທີ່ເພ້ຍແປ້ງອາໄສກິນນຳລ້ຽງ ໃຫ້ຖືກຕ້ອງຕາມລະບຽບຫຼັກການ, ກົດໝາຍ ວ່າດ້ວຍການປ້ອງກັນພືດ ແລະ ກົດໝາຍກະສິກຳ;
3. ຖ້າພົບເຫັນ ອາການ ແລະ ປາກົດການລະບາດຂອງເພ້ຍແປ້ງຢູ່ພື້ນທີ່ຕົນຮັບຜິດຊອບ, ໃຫ້ເປັນເຈົ້າການ ຮີບຮ້ອນສົມທົບກັບອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ ເພື່ອຈັດຕັ້ງດຳເນີນມາດຕະການ ແລະ ຂັ້ນຕອນຄວບຄຸມການແຜ່ລະບາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ;
4. ໃຫ້ກົມ ກອງ ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ຮຽບຮຽງເອກະສານ ແລະ ອອກຄຳແນະນຳລະອຽດ ດ້ານວິຊາການ ກ່ຽວກັບເພັ້ຍແປ້ງ ຕິດພັນກັບການຜະລິດມັນຕົ້ນ ເພື່ອເປັນເຄື່ອງມືໃຫ້ແກ່ຂະແໜງການສາຍຕັ້ງຢູ່ທ້ອງຖິ່ນໄດ້ເຜີຍແຜ່ ທັງທາງເລິກ ແລະ ທາງກວ້າງຢ່າງທັນການແຕ່ຫົວທີ.
5. ໃຫ້ທຸກພາກສ່ວນດັ່ງກ່າວຂ້າງເທິງ ປະຕິບັດລະບອບລາຍງານສ່ອງແສງສະພາບການເກີດຂຶ້ນຕໍ່ການຜະລິດມັນຕົ້ນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃຫ້ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ເປັນປົກກະຕິ.

ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ ບັນດາກົມ, ກອງ, ສະຖາບັນ, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ./.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ລີຕາເຮັ້ງ ຣາຊະພົນ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ຫ້ອງວ່າການສູນກາງພັກ | 01 ສະບັບ (ເພື່ອລາຍງານ); |
| 2. | ຫ້ອງວ່າການ ສນຍ | 01 ສະບັບ (ເພື່ອລາຍງານ); |
| 3. | ຫ້ອງການ ຄລບ | 01 ສະບັບ (ເພື່ອລາຍງານ); |
| 4. | ກະຊວງ, ອົງການທຽບເທົ່າ ບ່ອນລະ | 01 ສະບັບ (ເພື່ອຊາບ); |
| 5. | ຫ້ອງການປົກຄອງແຂວງ, ນະຄອນຫຼວງ | 17 ສະບັບ (ເພື່ອຊາບ); |
| 6. | ດ່ານສາກົນຊາຍແດນ ເຂົ້າອອກເມືອງ ບ່ອນລະ | 01 ສະບັບ (ເພື່ອປະຕິບັດ); |
| 7. | ກົມເອກະສານແຫ່ງຊາດ | 01 ສະບັບ (ເພື່ອຊາບ); |
| 8. | ເກັບມ້ຽນ | 01 ສະບັບ. |